# ປັດໄຈທາງດ້ານເສດຖະກິດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຕາມແນວຄິດຂອງຜູ້ບໍລິຫານ ແລະ ຄູສອນ ກໍລະນີສຶກສາ: ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ

ບູນລຽບ ແກ້ວວົງສາ[1], ອິນທະແສງ ອິນທະລາຊາ[2], ໜູໄກ ສີຫາເທບ[3], ຜິລາວັນ ທອມສົມບັດ[4]

*ພາກວິຊາເສດຖະສາດ, ຄະນະ ເສດຖະສາດ ແລະ ການຄຸ້ມຄອງ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ: 1) ສຶກສາສະພາບການປະລະການຮຽນ ຂອງນັກຮຽນຊັ້ນມັດ ທະຍົມຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ ແລະ 2). ສຶກສາປັດໄຈ ແລະ ສາເຫດ ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ. ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາ ໄດ້ແກ່: ຜູ້ບໍລິຫານໂຮງຮຽນ ຈໍານວນ 69 ຄົນ ແລະ ຄູສອນຊັ້ນມັດທະຍົມຕອນຕົ້ນ ຈໍານວນ 108 ຄົນ ພາຍໃນເມືອງປາກຊ່ອງ ເຊິ່ງມີຈໍານວນທັງໝົດ 177 ຄົນ. ເຄື່ອງມືທີ່ໃຊ້ໃນການສຶກສາໄດ້ແກ່ແບບສໍາພາດແບບມີໂຄງສ້າງ ແລະ ແບບສອບຖາມກ່ຽວກັບປັດໄຈ ແລະ ສາເຫດ ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ, ເຊິ່ງເປັນແບບມາດຕາສ່ວນປະ ມານຄ່າ (Rating Scale) ທີ່ແບ່ງອອກເປັນ 5 ລະດັບ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ໄດ້ແກ່: ຄ່າຄວາມຖີ່, ຄ່າເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ຜົນການຄົ້ນຄວ້າກ່ຽວກັບສະພາບການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກພົບວ່າ: ທົ່ວເມືອງປາກຊ່ອງ ມີໂຮງຮຽນມັດທະຍົມສຶກສາຕອນຕົ້ນທັງໝົດ 23 ແຫ່ງ. ໃນນັ້ນ, ມີໂຮງຮຽນມັດທະຍົມຕອນສຶກສາຕົ້ນ 9 ແຫ່ງ (ໂຮງຮຽນສົງ 1 ແຫ່ງ), ມີນັກຮຽນທັງໝົດ 5.167 ຄົນ, ຍິງ 2.665 ຄົນ. ມີພະນັກງານປະຈໍາການທັງໝົດໃນຂົງເຂດດ້ານສຶກສາ 715 ຄົນ, ຍິງ 406 ຄົນມີ, ໃນນັ້ນຄູສອນມັດທະຍົມຕອນຕົ້ນທັງໝົດ 128 ຄົນ, ຍິງ 104 ຄົນ. ການປະຕິບັດ 15 ຄາດ ໝາຍຂອງຂະແໜງການສຶກສາ ແລະ ກິລາ ທີ່ສະພາຮັບຮອງ ທົ່ວເມືອງປາກຊ່ອງສາມາດຈັດຕັ້ງປະຕິບັດໄດ້ບັນລຸ ມີ 9 ຄາດໝາຍ, ໃນນັ້ນອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 12,5% ປີ 2023 ເປັນ 16,9% ປີ 2024 (ຄາດໝາຍ ແມ່ນ 14%). ຜົນການສຶກສາປັດໄຈ ແລະ ສາເຫດ ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ໂດຍລວມຢູ່ໃນລະດັບປານກາງ. ເມື່ອພິຈາລະນາໃນແຕ່ລະດ້ານ ພົບວ່າ: ດ້ານສະພາບຄອບຄົວ ແລະ ເສດຖະກິດຄອບຄົວ ສິ່ງຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະ ຍົມຕອນຕົ້ນ ເປັນອັນດັບທີ 1 ມີຄ່າສະເລ່ຍ ເທົ່າກັບ 3.62, ຮອງລົງມາແມ່ນດ້ານສັງຄົມ ມີຄ່າສະເລ່ຍ ເທົ່າກັບ 3.53. ສ່ວນດ້ານທີ່ສົ່ງຜົນຕໍ່ກ່ານປະລະການຮຽນນ້ອຍສຸດ ແມ່ນດ້ານຜູ້ຮຽນ ມີຄ່າສະເລ່ຍເທົ່າກັບ 3.00.

**ຄໍາສັບສໍາຄັນ:** ການປະລະການຮຽນ, ອັດຕາການປະລະການຮຽນໃນຊັ້ນມັດທະຍົມ.

[1] *ຫ້ອງການສຶກສາທິການ ແລະ ກິລາເມືອງປາກຊ່ອງ, ອີເມວ:* Bounliap@gmail.com

[2] *ຄະນະວິທະຍາສາດທໍາມະຊາດ, ມະຫາວິທະຍາໄລ ຈໍາປາສັກ, ອີເມວ:* : inthalaxa1977@gmail.com

[3] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈໍາປາສັກ, ອີເມວ:* nou999sihathep@gmail.com

[4] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈໍາປາສັກ, ອີເມວ:* Nong.philavanh@gmail.com

# The Economic Factors Affectng On School Dropoup At Primary School. Base On Principal And Teachers' Opinion Case study: Seconary School In Paksong District, Champasack province

Bounliap KEOVONGSA[1], Inthaseng INTHALAXA[2], Noukay SYHATHEP[3], Philavanh HOMASOMBATH[4]

*Department of Economics, Faculty of Economics and Management*

## Abstract

The main objective of this study is: 1) to study the drop out school situation of secondary school at Paksong district, Champasak Province. 2. To study the factor and cause of drop out school of secondary school at Paksong district, Champasak Province. The total sampling of this study is principle and teacher of school at Paksong district about 177 people where 69 principles and 108 teachers. In this study we use questionnaire to ask about the factor and cause of drop out school of secondary school at Paksong district by using rating scale, so we have 5 level of scale. The statistic we use in this study is frequency, percentage, mean and standard division. The result show that in Paksong district has 23 secondary school and the total number of students is 5,167 people where 2,665 women. There are 715 people and 406 women who work as education field, where the teacher who work as secondary school has 128 people, 104 women. In addition, the dropout rate of secondary school has increasing from 12.5% in 2023 to 16.9% in 2024. The result of our second objective show that family and economy of family factor has the most influence to dropout rate of student. The second factor if the social factor and the lowest effect is the student factor where the study show the mean value that 3.62, 3.53 and 3.00 respectively.

**Keywords:** Drop out school, drop out rate of secondary school.

[1] *Office of education and sport, Email: Bounliap@gmail.com*
[2] *Faculty of Natural Science, Email: inthalaxa1977@gmail.com*
[3] *Faculty of Economics and Management, Email: nou999sihathep@gmail.com*
[4] *Faculty of Economics and Management, Email: Nong.philavanh@gmail.com*

## 1. ພາກສະເໜີ

ໃນໄລຍະຜ່ານມາອັດຕາການຈະເລີນເຕີບໂຕ ເສດ ຖະກິດໃນ ສປປ ລາວ (GDP) ໄດ້ມີການ ຂະຫຍາຍ ຕົວ ຢ່າງຕໍ່ເນື່ອງ, ເສດຖະກິດມະຫາພາກມີ ຄວາມໝັ້ນທ່ຽງໂດຍພື້ນຖານ ເຊິ່ງສະແດງອອກ ອັດຕາການຂະ ຫຍາຍຕົວຂອງເສດຖະກິດ (GDP) ໃນໄລຍະປີ 2001-2015 ໂດຍສະ ເລ່ຍແມ່ນບັນລຸ ໄດ້ 7,4% ຕໍ່ປີ. GDP ສະເລ່ຍຕໍ່ຫົວຄົນໄດ້ເພີ່ມຂຶ້ນ ຈາກ 319 ໂດລາ ໃນສົກປີ 2000-2001 ມາເປັນ 1,970 ໂດລາ ໃນສົກປີ 2014-2015 ໃນປີ 2011 ທະນາ ຄານໂລກໄດ້ເລື່ອນ ສປປ ລາວ ຈາກກຸ່ມ ປະເທດທີ່ມີລາຍໄດ້ຕ່ຳ (Low Income Countries) ຂຶ້ນມາສູ່ກຸ່ມປະເທດທີ່ມີລາຍໄດ້ປານ ກາງໃນລະດັບຕ່ຳ (Lower-Middle Income Countries) ແລະ ຍັ້ງຍືນວ່າ ສປປ ລາວ ແມ່ນ 1 ໃນ 10 ປະເທດໃນໂລກທີ່ມີການຂະຫຍາຍຕົວດ້ານ ເສດ ຖະກິດໄວ (ກະຊວງແຜນການ ແລະ ການ ລົງທຶນ, 2016). ໃນປະຈຸບັນ ການຂະຫຍາຍຕົວຂອງ ເສດຖະກິດຂອງປະ ເທດເຮົາເຫັນວ່າ: ມີການຫຼຸດລົງ ຢ່າງຕໍ່ເນື່ອງເຊິ່ງເປັນຜົນມາຈາກສະພາບເສດຖະກິດ ໂລກ, ການແຜ່ລະບາດຂອງເຊື້ອໄວຣັສໂຄວິດ 19 ແລະ ການກໍ່ສົງຄາມຂອງປະເທດມະຫາອຳນາດໃນ ໂລກ, ການຫຼຸດລົງຂອງເສດຖະກິດຂອງປະເທດເຮົາ ໄດ້ສົ່ງຜົນກະທົບເປັນວົງກວ້າງຕໍ່ທາງພາກລັດ ແລະ ເອ ກະຊົນ ແລະ ພື້ນຖານໂຄງລ່າງທາງເສດຖະກິດ ມະຫາພາກ-ຈຸລະພາກເສດຖະກິດຊຸມຊົນ ແລະ ຄົວ ເຮືອນເຊິ່ງເປັນຜົນມາຈາກຫຼາຍປັດໄຈໃນປະຈຸບັນ (ພະແນກເສດຖະກິດມະ ຫາພາກການຄ້າ ແລະ ການ ລົງທຶນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ, 2019).

ການຂະຫຍາຍຕົວທາງດ້ານເສດຖະກິດຂອງ ປະເທດ ແມ່ນມີຄວາມສຳຄັນຫຼາຍຕໍ່ລະບົບການສຶກ ສາ ແລະ ການພັດທະນາປະເທດຊາດໃຫ້ຈະເລີນ ຮຸ່ງເຮືອງ, ເພາະການສຶກສາເປັນຂະບວນການສຳຄັນ ໃນການພັດ ທະນາຊັບພະຍາ ກອນມະນຸດໃຫ້ມີ ຄວາມຮູ້, ຄວາມສາມາດໃນການນຳໄປໃຊ້ສອດຄ່ອງ ກັບສະພາບສັງຄົມປະຈຸບັນ, ເມືອງປາກຊ່ອງກໍແມ່ນ ເມືອງໜຶ່ງທີ່ມີອັດຕາການຈະເລີນເຕີບໂຕທາງດ້ານ ເສດຖະກິດຂະຫຼາຍຕົວ ຢ່າງຕໍ່ເນື່ອງໂດຍມີອັດຕາ ການຂະ ຫຍາຍຕົວສະເລ່ຍ 7.3% ຕໍ່ປີ, ລວມຍອດ ມູນຄ່າຜະລິດ ຕະພັນພາຍໃນເມືອງລວມ 5 ປີ ຜ່ານ ມາບັນລຸໄດ້ 9.332,58 ຕື້ກີບ, ທຽບໃສ່ແຜນການ ລື່ນແຜນ 30%, ປີ 2019 ປະຕິບັດໄດ້ 2.088,75 ຕື້ ກີບ, ສະເລ່ຍຕໍ່ຫົວຄົນບັນລຸ 24.085.096 ກີບ ຫຼື ເທົ່າກັບ 2.804 ໂດລາສະຫາລັດຕໍ່ຄົນຕໍ່ປີ, ໂຄງ ປະກອບເສດຖະກິດຫັນປ່ຽນຕາມທ່າແຮງບົ່ມຊ້ອນ. ໃນ ນັ້ນຂົງເຂດກະສິກຳຂະຫຍາຍຕົວສະເລ່ຍ 7,69% ກວມ 84,21%, ອຸດສະຫະກຳ ຂະຫຍາຍຕົວສະເລ່ຍ 4,51%, ກວມ 7,07% ແລະ ບໍລິການຂະຫຍາຍຕົວ ສະ ເລ່ຍ 4,14%, ກວມ 8,73% ຂອງລວມຍອດ ມູນຄ່າຜະ ລິດຕະພັນພາຍໃນເມືອງ (ຫ້ອງການການ ຄ້າເມືອງປາກຊ່ອງ 2020).

ລະບົບພື້ນຖານໂຄງລ່າງດ້ານເສດຖະກິດຄົວ ເຮືອນ ແລະ ຊຸມຊົນແມ່ນມີຄວາມສຳຄັນຫຼາຍຕໍ່ການ ສຶກສາໃນທຸກລະດັບຊັ້ນຮຽນນັບແຕ່ຊັ້ນປະຖົມສຶກ ສາ, ມັດທະຍົມສຶກສາ, ອາຊີວະສຶກສາ ແລະ ການສຶກ ສາຊັ້ນສູງ ເພາະເປັນສິ່ງທີ່ຜັກດັນໃຫ້ພໍ່ແມ່ຜູ້ປົກຄອງ ລວມທັງໂຕເດັກມີແນວຄິດອຸ ດົມການຢາກຮຽນໃນ ຊັ້ນຮຽນລະດັບທີ່ສູງຂຶ້ນເພື່ອພັດທະ ນາຕົນເອງໃຫ້ມີ ຄວາມຮູ້, ຄວາມສາມາດໃນການປະກອບອາຊີບທີ່ດີ ຂຶ້ນໃນອະນາຄົດ ແຕ່ໃນປະຈຸບັນທຸກລະດັບຊັ້ນຮຽນ ໃນທົ່ວປະເທດເກີດມີບັນຫາ ແລະ ປະກົດການຫຍໍ້ທໍ້ ຕ່າງໆຢ່າງຫຼວງຫຼາຍ. ເຖິງວ່າທັງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາທາງການສຶກສາໄດ້ເອົາໃຈໃສ່ ຊຸກຍູ້, ສົ່ງ ເສີມ ແລະ ປັບປຸງຄຸນນະພາບການສຶກສາ

ໃນຊັ້ນມັດທະຍົມສຶກສາກໍຕາມ, ແຕ່ຈາກຂໍ້ມູນສະຖິຕິເຫັນໄດ້ວ່າ ການສຶກສາໃນຊັ້ນມັດທະຍົມສຶກສາກໍາລັງພົບຄວາມທ້າທາຍສູງ. ໂດຍສະເພາະ ແມ່ນການປະລະການຮຽນຂອງນັກຮຽນຊັ້ນມັດ ທະຍົມສຶກສາຕອນຕົ້ນທີ່ນັບມື້ສູງຂຶ້ນເລື້ອຍໆ ຕໍ່ສະພາບບັນຫາດັ່ງກ່າວທາງກະຊວງສຶກສາທິການ ແລະ ກິລາ ແລະ ອົງການຈັດຕັ້ງທຸກຂັ້ນໄດ້ລົງໄກ້ຊິດ, ຕິດຕາມປຸກລະດົມແນວຄິດ ນັກຮຽນໃຫ້ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ ແລະ ລັດ. ແຕ່ມາຮອດປະຈຸບັນການປະລະການຮຽນ, ຈາກສະຖິຕິເຫັນໄດ້ວ່າ ອັດຕາຄ້າງຫ້ອງ ແລະ ອັດຕາປະລະໃນຊັ້ນມັດທະຍົມຕົ້ນມີທ່າອ່ຽງເພີ່ມຂຶ້ນ ເຊິ່ງເປັນສິ່ງທ້າທາຍຫຼາຍຕໍ່ການບັນລຸຄາດໝາຍ 15 ຂອງກະຊວງສຶກສາທິການ ແລະ ກິລາໄດ້ກໍານົດໄວ້ (ບົດສະຫຼຸບການຈັດຕັ້ງປະຕິ ບັດແຜນພັດທະນາການສຶກສາ ແລະ ກິລາ ປະຈໍາສົກຮຽນ 2019-2020 ແລະ ແຜນພັດທະນາການສຶກສາ ແລະ ກິລາປະຈໍາສົກຮຽນ 2020-2021: 28).

ເມືອງປາກຊ່ອງ ກໍແມ່ນເມືອງໜຶ່ງທີ່ເກີດມີປະກົດການນີ້ຂຶ້ນ ເປັນຕົ້ນແມ່ນການປະລະການຮຽນຂອງນັກ ຮຽນຊັ້ນມັດທະຍົມສຶກສາຕອນຕົ້ນເປັນຈໍານວນຫຼວງຫຼາຍ ເມື່ອທຽບກັບບັນດາ 10 ຕົວເມືອງໃນແຂວງ ຈໍາປາສັກ. ຖືວ່າເມືອງປາກຊ່ອງ ຈັດຢູ່ໃນອັນດັບທີ 5 ຂອງການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ, ເຊິ່ງການປະ ລະການຮຽນຂອງນັກຮຽນດັ່ງກ່າວໄດ້ເກີດມີຫຼາຍບັນຫາ ແລະ ຫຼາຍປັດໄຈໃນການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ, ເມືອງປາກຊ່ອງ. ຈາກງານວິໄຈ (ສູນສຶກສາຮຽນຮ່ວມ, 2011) ໄດ້ອະທິບາຍເຖິງປະກົດການທີ່ພາໃຫ້ອັດຕາປະລະການຮຽນສູງໃນລາວ ມີສາເຫດພື້ນຖານ, ດັ່ງນີ້: ພໍ່-ແມ່ມີລະດັບການສຶກສາຕໍ່າ, ລາຍໄດ້ຂອງຄອບຄົວຕໍ່າ, ໄລຍະຫ່າງໄກຈາກບ້ານຫາໂຮງຮຽນ, ເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທໍາຂອງນັກຮຽນ.

ດ້ວຍເຫດຜົນທີ່ກ່າວມາຂ້າງເທິງ ຜູ້ວິໄຈຈຶ່ງມີຄວາມສົນໃຈສຶກສາ ປັດໄຈທາງດ້ານເສດຖະກິດທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ, ເຊິ່ງຈະເປັນປະ ໂຫຍດນໍາເອົາຂໍ້ມູນພື້ນຖານທີ່ໄດ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ ໃນການນໍາໄປພິຈາລະນາ ແລະ ແກ້ໄຂໃນອານາຄົດໃຫ້ ທ່ວງທັນກັບສະພາບຄວາມເປັນຈິງ.

## 2. ຈຸດປະສົງ

2.2 ເພື່ອສຶກສາສະພາບການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ.

2.3 ເພື່ອສຶກສາປັດໄຈ ແລະ ສາເຫດການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ.

## 3. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ ມີຈຸດປະສົງຫຼັກ ເພື່ອສຶກສາປັດໄຈ ແລະ ສາເຫດ ທີ່ສົ່ງຜົນຕໍ່ການປະລະການຮຽນ ຂອງນັກ ຮຽນຊັ້ນມັດທະຍົມຕອນຕົ້ນ ຕາມແນວຄິດຂອງຜູ້ບໍລິຫານ ແລະ ຄູສອນ, ກໍລະນີສຶກສາ: ເມືອງປາກຊ່ອງ, ແຂວງຈໍາປາສັກ. ໂດຍການຄັດເລືອກກຸ່ມຕົວຢ່າງດ້ວຍການໃຊ້ສູດການຄໍານວນຕາມວິທີຂອງ Taro Yamane ເຊິ່ງໃນການສຶກສາຂອງເຮົາໄດ້ນໍາໃຊ້ກຸ່ມຕົວຢ່າງຢູ່ຈໍານວນ 177 ຄົນ. ໂດຍແບບສອບຖາມທີ່ໃຊ້ໃນການສໍາຫຼວດ ເປັນແບບສອບຖາມແບບມາດຕາສ່ວນປະມານຄ່າ (Rating Scale) ທີ່ແບ່ງອອກເປັນ 5 ລະດັບຕາມວິທີຂອງເລີນຊິດ (Rensis Likert Method). ນອກຈາກນີ້ ຍັງມີການອອກແບບແບບສໍາພາດເພື່ອສໍາພາດສະພາບການປະລະການຮຽນຂອງນັກ ຮຽນ

ຈາກຜູ້ບໍລິຫານໂຮງຮຽນ ແລະ ຄູສອນ. ຫຼັງຈາກທີ່ຜູ້ວິໄຈ ໄດ້ດຳເນີນການເກັບລວບລວມຂໍ້ມູນຈາກແບບສອບຖາມ ແລະ ການສຳພາດສຳເລັດແລ້ວ, ໄດ້ນຳເອົາຂໍ້ມູນທີ່ໄດ້ມາກວດສອບເບິ່ງຄວາມຖືກຕ້ອງຂອງຂໍ້ມູນວ່າ ມີຂໍ້ມູນສູນ ຫາຍ ຫຼື ບໍ? ແລະ ໄດ້ແບ່ງການວິເຄາະອອກເປັນ 2 ກໍລະນີ ໄດ້ແກ່: 1) ການວິເຄາະຂໍ້ມູນທີ່ໄດ້ຈາກການສຳພາດ ເປັນການນຳໃຊ້ຫຼັກການໃນການວິເຄາະດ້ານເນື້ອໃນ (Content Analysis) ຂອງຂໍ້ມູນຈາກເອກະສານ ແລະ ຂໍ້ມູນຈາກການສຳພາດ. 2) ການວິເຄາະຂໍ້ມູນທີ່ໄດ້ ຈາກການສອບຖາມ ເປັນການວິເຄາະຂໍ້ມູນຄວາມຄິດເຫັນກ່ຽວກັບປັດໄຈ ແລະ ສາເຫດທີ່ສົ່ງຜົນຕໍ່ການປະລະການຮຽນຂອງນັກ ຮຽນຊັ້ນມັດທະຍົມຕອນຕົ້ນ. ໂດຍການນຳໃຊ້ສະຖິຕິພັນລະນາ (Descriptive Statistics), ພ້ອມທັງວິເຄາະຂໍ້ມູນດ້ວຍໂປຣແກຣມສຳເລັດຮູບທາງສະຖິຕິ ເຊິ່ງນຳໃຊ້ສະຖິຕິພັນລະນາ (Descriptive Statistics) ໄດ້ແກ່: ຄ່າສະເລ່ຍ (Mean), ເປີເຊັນ (Percentage) ແລະ ຄ່າຜັນປ່ຽນມາດ ຕະຖານ (Standard Deviation).

## 4. ຜົນໄດ້ຮັບ

ສຳລັບຂໍ້ມູນຂໍ້ມູນດ້ານເພດຂອງຜູ້ຕອບແບບສອບຖາມເຫັນວ່າຜູ້ແບບສອບຖາມສ່ວນຫຼາຍແມ່ນເພດຊາຍ ເຊິ່ງມີຈຳນວນ 98 ຄົນ ຄິດເປັນເປີເຊັນກວມເອົາ 55.40%, ຮອງລົງມາແມ່ນເພດຍິງມີຈຳນວນ 79 ຄົນ ຄິດເປັນເປີເຊັນກວມເອົາ 44.60% ຂອງຈຳນວນຕົວຢ່າງທັງໝົດ. ສຳລັບຂໍ້ມູນດ້ານອາຍຸຂອງຜູ້ຕອບແບບສອບຖາມ ເຫັນວ່າຜູ້ຕອບແບບສອບຖາມສ່ວຍຫຼາຍແມ່ນມີອາຍຸລະຫວ່າງ 31-40 ປີ ເຊິ່ງມີຈຳນວນ 92 ຄົນ ຄິດເປັນເປີເຊັນກວມເອົາ 52.0% ຮອງລົງມາແມ່ນ ຜູ້ຕອບແບບສອບຖາມມີອາຍຸ 50 ປີ ຂຶ້ນໄປເຊິ່ງມີຈຳນວນ 40 ຄົນຄິດເປັນເປີເຊັນກວມເອົາ 22.6% ສ່ວນຈຳນວນຜູ້ຕອບແບບສອບຖາມທີ່ນ້ອຍທີ່ສຸດແມ່ນຜູ້ມີອາຍຸລະຫວ່າງ 41–50 ປີ ເຊິ່ງມີຈຳນວນ 21 ຄົນ ຄິດເປັນເປີເຊັນກວມເອົາ 11.9% ຂອງກຸ່ມຕົວຢ່າງທັງໝົດ.

ຜົນການສຳພາດປັດໄຈ ແລະ ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຕາມ ແນວຄິດຜູ້ບໍລິຫານ ແລະ ຄູສອນຢູ່ເມືອງປາກຊ່ອງ, ແຂວງ ຈຳປາສັກ. ຜ່ານການສຳພາດບັນຫາການປະລະການຮຽນຂອງນັກຮຽນຈາກຜູ້ບໍລິຫານ ແລະຄູສອນສາມາດສະຫຼຸບສັງລວມໃນແຕ່ລະດ້ານຄື: 1) ດ້ານອາຈານຜູ້ສອນ ມີນັກຮຽນບາງຄົນເຂົ້າຮຽນບໍ່ເອົາຕັ້ງໃຈຮຽນເວລາຮຽນບໍ່ບັນທຶກບົດຮຽນມີນັກຮຽນຈຳນວນໜຶ່ງຫຼິ້ນແຕ່ໂທລະສັບບໍ່ມີພື້ນ ຖານການຮຽນແຕ່ຊັ້ນປະຖົມຮອດມັດທະຍົມຍັງຮຽນອ່ອນຈຶ່ງເຮັດໃຫ້ການປະລະການຮຽນຂອງນັກຮຽນຈຳນວນໜຶ່ງ.2) ດ້ານການບໍລິຫານຄຸ້ມຄອງການສຶກສາ ໃນການປະຕິບັດ 7 ໜ້າວຽກຂອງຜູ້ບໍລິຫານຍັງບໍ່ທັນໄດ້ດີເທົ່າທີ່ຄວນໂດຍສະເພາະແມ່ນວຽກງານຊຸມຊົນ ແລະ ວຽກງານຄະນະພັດ ທະນາການສຶກສາຂັ້ນບ້ານຍັງບໍ່ທັນແຂງແຮງ. 3) ດ້ານສັງ ຄົມ ໃນການມີສ່ວນຮ່ວມລະຫວ່າງອຳນາດການປົກບ້ານ, ຄູ-ອາຈານ ແລະຜູ້ລິຫານການສຶກສາຍັງບໍ່ທັນໄດ້ດີເທົ່າທີ່ຄວນ. 4) ດ້ານສະພາບແວດລ້ອມ ໂຮງຮຽນບາງແຫ່ງຍັງບໍ່ທັນຕາມມາດຕາຖານຂອງກະຊວງສຶກສາໂດຍສະເພາະຕາມ 3 ລັກສະນະ 5 ຫຼັກມູນຂອງກະຊວງສຶກສາທີ່ໄດ້ກຳນົກໄວ້ເປັນຕົ້ນແມ່ນສວນດອກໄມ້, ເດີ່ນບານ, ການຈັດກິດຈະກຳຖາມຕອບບໍ່ທັນເຮັດໄດ້ຢ່າງຕໍ່ເນື່ອງ.

## 5. ວິພາກຜົນ

ຈາກການວິເຄາະປັດໄຈ ແລະ ສາເຫດ ທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ຕາມແນວຄິດຜູ້ບໍລິຫານ ແລະ ຄູສອນ ຢູ່ເມືອງປາກຊ່ອງໃນພາບລວມເຫັນວ່າ ດ້ານສະພາບຄອບຄົວ ແລະ ເສດຖະ ກິດຄອບຄົວສາມາດບົ່ງຊີ້ໄດ້ດີທີ່ສຸດ ໂດຍມີຄ່າສະເລ່ຍ $\bar{X}$= 3.62 ຄ່າຜັນປ່ຽນມາດຕະຖານ S.D = 1.28 ຮອງລົງມາແມ່ນ

ດ້ານສັງຄົມເຊິ່ງມີຄ່າສະເລ່ຍ $\bar{X}$= 3.53 ຄ່າຜັນປ່ຽນມາດຕະຖານ S.D = 1.21 ແລະ ຕົວບົ່ງຊີ້ທີ່ເປັນສາເຫດຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນໜ້ອຍທີ່ສຸດແມ່ນດ້ານຜູ້ຮຽນ ໂດຍມີຄ່າສະເລ່ຍ $\bar{X}$= 3.00 ຄ່າຜັນປ່ຽນມາດຕະຖານ S.D = 1.17. ສໍາລັບຂໍ້ມູນດ້ານຜູ້ຮຽນທີ່ເປັນປັດໄຈ ແລະ ສາເຫດທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນເຫັນວ່າ: ຕົວບົ່ງຊີ້ອັນດັບທີ 2 ສາມາບົ່ງຊີ້ໄດ້ດີທີ່ສຸດຄື: ນັກຮຽນມີຄວາມຮູ້ພື້ນຖານໃນວິຊາທີ່ຮຽນໜ້ອຍໂດຍ ມີຄ່າສະເລ່ຍ $\bar{X}$= 3.90 ຄ່າຜັນປ່ຽນມາດຕະຖານ S.D = 1.15 ແລະ ຕົວບົ່ງຊີ້ທີ່ເປັນສາເຫດຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນໜ້ອຍທີ່ສຸດຕົວບົ່ງຊີ້ອັນດັບທີ 1 ແລະ 7 ຄື: ບໍ່ເຂົ້າໃຈເນື້ອໃນ ບົດຮຽນໃນລາຍວິຊາທີ່ຮຽນ ແລະ ເຂົ້າກຸ່ມກັບໝູ່ເພື່ອນບໍ່ໄດ້ ໂດຍມີຄ່າສະເລ່ຍ $\bar{X}$= 2.73 ຄ່າຜັນປ່ຽນມາດຕະ ຖານ S.D = 1.04. ສໍາລັບຂໍ້ມູນດ້ານຄູສອນທີ່ເປັນປັດໄຈ ແລະ ສາເຫດທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນເຫັນວ່າ: ຕົວບົ່ງຊີ້ອັນດັບທີ 3 ສາມາດບົ່ງຊີ້ໄດ້ດີທີ່ສຸດຄື: ຄູອະທິບາຍເນື້ອໃນບົດຮຽນໄວຫຼາຍເຮັດໃຫ້ການຕິດ ຕາມເນື້ອໃນບົດຮຽນບໍ່ທັນ ໂດຍມີຄ່າສະເລ່ຍ $\bar{X}$= 3.96 ຄ່າຜັນປ່ຽນມາດຕະຖານ S.D = 1.02 ແລະ ຕົວບົ່ງຊີ້ທີ່ຊີ້ໄດ້ໜ້ອຍທີ່ສຸດແມ່ນຕົວບົ່ງຊີ້ອັນດັບທີ 1 ຄື: ຄູສອນຂາດປະສົບການໃນການສິດສອນໂດຍມີຄ່າສະເລ່ຍ $\bar{X}$= 2.73 ຄ່າຜັນປ່ຽນມາດຕະ ຖານ S.D = 0.93. ສໍາລັບຂໍ້ມູນດ້ານດ້ານສະພາບຄອບຄົວ ແລະ ເສດຖະກິດຄອບຄົວທີ່ເປັນປັດໄຈ ແລະ ສາເຫດທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນເຫັນວ່າ: ຕົວບົ່ງຊີ້ອັນດັບທີ 3 ສາມາດບົ່ງຊີ້ໄດ້ດີທີ່ສຸດຄື: ບັນຫາເລື້ອງສະພາບເສດ ຖະກິດໂດຍມີຄ່າສະເລ່ຍ $\bar{X}$= 4.25 ຄ່າຜັນປ່ຽນມາດຕະ ຖານ S.D = 1.35 ແລະ ຕົວບົ່ງຊີ້ທີ່ຊີ້ໄດ້ໜ້ອຍທີ່ສຸດຄື: ຕົວບົ່ງຊີ້ອັນດັບທີ 2 ຜູ້ປົກຄອງແນະນໍາໃຫ້ລາອອກໂດຍມີ ຄ່າສະເລ່ຍ $\bar{X}$= 2.79 ຄ່າຜັນປ່ຽນມາດຕະຖານ S.D = 1.37. ສໍາລັບຂໍ້ມູນດ້ານສະພາບແວດລ້ອມໃນສະຖານທີ່ການສຶກສາທີ່ເປັນປັດໄຈ ແລະ ສາເຫດທີ່ມີຜົນຕໍ່ການປະ ລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນເຫັນວ່າ: ຕົວບົ່ງຊີ້ອັນດັບທີ 10 ສາມາດບົ່ງຊີ້ໄດ້ດີທີ່ສຸດຄື: ຄວາມສະອາດພາຍໃນສະຖານການສຶກສາ ໂດຍມີຄ່າສະ ເລ່ຍ $\bar{X}$= 3.56 ຄ່າຜັນປ່ຽນມາດຕະຖານ S.D = 1.38 ແລະ ຕົວບົ່ງຊີ້ທີ່ຊີ້ໄດ້ໜ້ອຍທີ່ສຸດແມ່ນຕົວບົ່ງຊີ້ອັນດັບທີ 2 ຄືສະຖານການສຶກສາມີກົດລະບຽບເຄັ່ງຂັດເກີນໄປ ໂດຍມີ ຄ່າສະເລ່ຍ $\bar{X}$= 2.05 ຄ່າຜັນປ່ຽນມາດຕະຖານ S.D = 1.13. ສໍາລັບຂໍ້ມູນດ້ານສັງຄົມທີ່ເປັນປັດໄຈ ແລະ ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະ ຍົມຕອນຕົ້ນເຫັນວ່າ: ຕົວບົ່ງຊີ້ອັນດັບທີ 1 ສາມາດບົ່ງຊີ້ໄດ້ດີທີ່ສຸດຄື: ສະຖານທີ່ການສຶກສາຢູ່ໃກ້ສະຖານທີ່ບັນເທີງ, ແຫຼ່ງອະບາຍຍະມຸກ ໂດຍມີຄ່າສະເລ່ຍ $\bar{X}$= 3.82 ຄ່າຜັນປ່ຽນມາດຕະຖານ S.D=1.12 ແລະ ຕົວບົ່ງຊີ້ທີ່ຊີ້ໄດ້ໜ້ອຍທີ່ສຸດແມ່ນຕົວບົ່ງຊີ້ອັນດັບທີ 3 ຄື ຂາດເພື່ອນ ແລະ ການຍອມຮັບຈາກກຸ່ມ ໂດຍມີຄ່າສະເລ່ຍ $\bar{X}$= 2.89 ຄ່າຜັນປ່ຽນມາດຕະຖານ S.D = 1.17.

## 6. ສະຫຼຸບຜົນ

ການສຶກສາປັດໄຈ ແລະ ສາເຫດທີ່ສົ່ງຜົນຕໍ່ການປະ ລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຕາມ ແນວຄວາມຄິດຂອງຜູ້ບໍລິຫານ ແລະ ຄູສອນ ກໍລະນີສຶກ ສາ: ເມືອງປາກຊ່ອງ, ແຂວງຈໍາປາສັກ, ຜູ້ວິໄຈ ໄດ້ສຶກສາຢູ່ 2 ຈຸດປະສົງຄື: 1) ເພື່ອສຶກສາສະພາບການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ; 2) ເພື່ອສຶກສາປັດໄຈ ແລະ ສາເຫດການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ ໃນການສຶກສາຄັ້ງນີ້ຜູ້ສຶກສາໄດ້ເລືອກກຸ່ມຕົວຢ່າງຈາກ

ການນຳໃຊ້ສູດ Taro Yamane ຈຳນວນທັງໝົດ 177 ຄົນ ເຊິ່ງແມ່ນຜູ້ບໍລິຫານ ແລະ ຄູຜູ້ສອນ ຢູ່ເມືອງປາກ ຊ່ອງ ແຂວງຈຳປາສັກ ໂດຍໃຊ້ແບບສອບຖາມເປັນ ເຄື່ອງມືໃນການເກັບຂໍ້ມູນ ແລະ ວິ ເຄາະຂໍ້ມູນໂດຍໃຊ້ ການການຄິດໄລ່ອັດຕາສ່ວນຮ້ອຍ (%), ຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຕະຖານ (S.D) ແລະ ອະທິບາຍຜົນຂໍ້ມູນ ແບບສະຖິຕິພັນລະນາ (Descriptive Statistics).

ຈາກການສຶກສາເຫັນວ່າ ຜູ້ຕອບແບບສອບຖາມ ສ່ວນ ຫຼາຍແມ່ນເພດຊາຍເຊິ່ງມີຈຳນວນ 98 ຄົນ, ກວມ ເອົາ 55.40 %, ມີອາຍຸລະຫວ່າງ 31–40 ປີ ມີຈຳນວນ 92 ຄົນ, ກວມເອົາ 52.0 %, ໜ້າທີ່ຮັບຜິດຊອບຄູສອນ ຈຳນວນ 108 ຄົນ, ກວມເອົາ 61.1 %. ຜ່ານການສຶກສາ ເຫັນວ່າປັດໄຈ ແລະ ສາເຫດການປະລະການຮຽນຂອງ ນັກຮຽນຊັ້ນມັດທະຍົມຕອນຕົ້ນຕາມຄວາມຄິດເຫັນຂອງ ຜູ້ບໍລິຫານ ແລະ ຄູສອນຢູ່ເມືອງປາກຊ່ອງເຫັນວ່າ ດ້ານ ສະພາບຄອບ ຄົວ ແລະ ເສດຖະກິດຄອບຄົວສາມາດບົ່ງຊີ້ ໄດ້ດີທີ່ສຸດ ໂດຍມີຄ່າສະເລ່ຍ $\bar{X}$= 3.62 ຄ່າຜັນປ່ຽນ ມາດຕະຖານ S.D = 1.28. ຜົນການວິໄຈຄັ້ງນີ້ສະແດງ ໃຫ້ເຫັນວ່າປັດໄຈ ແລະ ສາເຫດການປະລະການຮຽນຂອງ ນັກຮຽນຊັ້ນມັດທະ ຍົມຕອນຕົ້ນ ຕາມຄວາມຄິດເຫັນ ຂອງຜູ້ບໍລິຫານ ແລະ ຄູ ສອນຢູ່ເມືອງປາກຊ່ອງ, ແຂວງ ຈຳປາສັກ ສະແດງໃຫ້ເຫັນວ່າສະພາບຄອບຄົວ ແລະ ເສດຖະກິດຄອບຄົວໃນປະຈຸບັນ ເປັນສາເຫດຫຼັກທີ່ສົ່ງຜົນ ຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ສອດຄ່ອງກັບງານວິໄຈ Esch (2003: 90) ໄດ້ສຶກສາ ການປະລະການຮຽນໃນໂຮງຮຽນມັດຍົມສຶກສາພົບວ່າ: ອົງປະກອບທີ່ກ່ຽວຂ້ອງກັບການປະລະການຮຽນໄດ້ແກ່: ສະພາບເສດຖະກິດ-ສັງຄົມເປັນສາເຫດຫຼັກ ທີ່ມີຜົນຕໍ່ ການປະລະການຮຽນຂອງນັກ ຮຽນຊັ້ນມັດທະຍົມສຶກສາ ແລະ ສອດຄ່ອງກັບງານວິໄຈຂອງ ນິງລັກ ສີສອນ (2017) ໄດ້ສຶກສາປັດໄຈ ແລະ ສາ ເຫດການປະລະການຮຽນ ຂອງນັກຮຽນຕາມຄວາມຄິດ ເຫັນຂອງຜູ້ບໍລິຫານ ໃນ ສະຖານການສຶກສາສັງກັດສຳນັກ ງານເຂດພື້ນທີ່ການສຶກ ສາປະຖົມສຶກສາຈັນທະບູລີ, ເຊິ່ງຜົນວິໄຈພົບວ່າ: ປັດໄຈ ແລະ ສາເຫດ ທີ່ສົ່ງຜົນຕໍ່ການປະ ລະການຮຽນຂອງ ນັກຮຽນແມ່ນຍ້ອນສະພາບເສດຖະກິດຄອບຄົວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. ບົດສະຫຼຸບ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາປະຈຳສົກຮຽນ 2019-20 ແລະ ແຜນ ພັດທະນາການສຶກສາ ແລະ ກິລາ ສົກຮຽນ 2020-21, 2020.

ກະຊວງແຜນການ ແລະ ການລົງທຶນ. ແຜນພັດທະນາ ຂະ ແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021 - 2025), 2020.

ກະຊວງແຜນການ ແລະ ການລົງທຶນ. ວິໄສທັດຮອດ ປີ 2030 ຍຸດທະສາດຮອດປີ 2030 ແລະ ແຜນ ພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງ ທີ VIII (2016-2020), 2015.

ສູນການສຶກສາຮຽນຮ່ວມ (ສຮ), ໂຄງການພັດທະນາ ການສຶກສາຂັ້ນ, 2011.

ພົ້ນຖານກິດສະໜາ ສັກສຣີ .ຈິດວິທະຍາການສຶກສາ. ກຣຸງເທບ: ບຳຣຸງສາສນ, 1937.

ຂະນິບ ເພັດຊ້ອນ. ການປະລະການຮຽນຂອງນັກສຶກ ສາຊ່າງອຸດສາຫະກຳໃນວິທະຍາໄລເທກນິກ ສີ່ ແຂວງພາກໃຕ້. ວິທະຍານິພົນ, ຄູສາດ ອຸດສາຫະກຳມະຫາບັນດິດ, ສະຖາບັນເທັກໂນໂລ ຍີ ພະຈອມເກລົ້າທົນບຸຣີ, 1997

ຊາຍ ສຸກເສວບັນດິດ. ການສຶກສາບັນຫາການອອກ ກລາງປີຂອງນັກຮຽນລະບົບທະວິພາຄີ ຫຼັກສູດປະ ການີ, 2003.

ຍະບັດວິຊາຊີບ (ປວຊ). ປະເພດວິຊາຊ່າງອຸດສາຫະກຳ ສັງກັດກົມອາຊີວະສຶກສາວິທະຍາໄລເທັກນິກຣາດບຸຣີ. ວິ ທະຍານິພົນ, ຄຣູສາດມະຫາບັນດິດ, ສະຖາບັນຣາດຊະພັດພະນະຄອນ, 2009.

ບັນຈົ່ງ ໂອລາຣີ ແລະ ຄະນະໆ. ລາຍງານການວິໄຈເລື່ອງ ປັດໄຈທີ່ມີຜົນຕໍ່ການເລືອກເຂົ້າ ສຶກສາ ແລະ ການອອກກລາງຄັນຕາມຄວາມເຫັນຂອງນິສິດຣະດັບປຣິຍາດຣີ ມະຫາວິທະຍາລັຍທັກສິນ, ວິທະຍານິພົນ, ມະຫາວິທະ ຍາໄລທັກສິນ, 2003.

ບຸນໂຊຕິ ຊານາຍ ແລະ ອຸໄຣຣັກ ດຸນວັນນະ. ການສຶກສາບັນຫາ ແລະ ສາເຫດການປະລະການຮຽນຂອງນັກ ຮຽນນັກສຶກສາ ວິທະຍາໄລເທັກນິກນະຄອນສຣີທຳມະ ຣາດ. ລາຍງານວິໄຈ, ວິທະຍາໄລເທັກນິກນະຄອນສຣີທຳມະຣາດ, 2011.

ເບນຈາພາ ສຸດທະພິນທຸ. ສາເຫດຂອງການສູເສຍທາງການສຶກສາ ລະດັບປະກາດນິຍະບັດວິຊາຊີບ: ກໍລະນີສຶກສາ: ວິທະຍາເຂດຂອງພາກຕະເວັນອອກສ່ຽງເໜືອ ສະຖາບັນເທັກໂນໂລຢີຣາດຊະມົງຄົນ.ວິທະຍານິພົນ, ຄູສາດອຸດສາຫະກຳມະຫາບັນດິດ, ສະຖາບັນເທັກໂນໂລຍີພະຈອມເກລົ້າ ພະນະຄອນເໜືອ, 1993.

ພຣິນ ທະນະໂຊຕິພົນ ແລະ ເພຍນີ ແນຣອດ. ສາເຫດການອອກກາງປີຂອງນັກຮຽນຊັ້ນມັດຍົມສຶກສາຕອນຕົ້ນໃນເຂດພື້ນທີ່ ການສຶກສາມັດຍົມສຶກສາເຂດ 25 ແຂວງຂອນແກ່ນ, ວິທະຍານິພົນ, ມະຫາວິທະຍາໄລຂອນແກ່ນ, 2021.

ຈັນທຣາ ອຸ້ຍເອ້ງ ແລະ ວັນນະກອນ ພິນພິໄຊ. ຄຸນນະ ພາບຊີວິດ ແລະ ປັດໄຈທີ່ມີຜົນຕໍ່ການອອກຈາກໂຮງ ຮຽນກາງປີ ຂອງເຢົາວະຊົນໃນເມືອງສີເກົາ, ແຂວງຕຣັງ. ວິທະຍານິພົນ, ຄະນະວິທະຍາສາດ ແລະ ເທັກໂນໂລຢີການປະມົງ, ມະຫາວິທະຍາໄລເທກໂນໂລຢີຣາດມົງຄົນ 2017.

ປຣັນຊາ ເວສາຣັດ. ຫຼັກການຈັດການສຶກສາ. ຊຸດຝຶກອົບຮົມຜູ້ບໍລິຫານ: ປະມວນສາລະ (ພິມຄັ້ງທີ່ 2). ກຸງເທບມະຫານະຄອນ : ບໍລິສັດ ຈຸດທອງຈຳກັດ, 2004.

ເພັດພະເຢົາ ແຢ້ມຢິນດີ ແລະ ສົມໝາຍ ອໍ່າດອນກລອຍ (2013:1 ) ການສຶກສາ ສາເຫດຂອງການສ່ຽງອອກກາງປີຂອງ ນັກສຶກສາຫຼັກສູດ ປະກາດນີຍະບັດວິຊາຊີບ (ປວຊ) ວິທະຍາໄລພະນິດຍະການບຶງພະພິສະນຸໂລກ ສັງກັດສຳນັກງານ, 2013.

ພະເຢົາ ດີໃຈ ແລະ ຄະນະ. ປັດໄຈທີ່ມີຜົນຕໍ່ການປະລະການຮຽນຕາມຄວາມຄິດເຫັນຂອງນັກສຶກສາລະດັບປະ ລິນຍາຕີຂອງມະຫາວິທະຍາໄລເທັກໂນໂລຍຣາດຊະມົງຄົນພະນະຄອນ. ລາຍງານວິໄຈ, ມະຫາວິທະຍາໄລເທັກໂນໂລຢີຣາດຊະມົງຄົນພະນະຄອນ, 2009.

ພຣະຄຣູສັງຄຣັກສັກນະຣິນດິນຣິນ ໂຕສະຍານົນ. ການສຶກສາສາເຫດແລະແນວທາງແກ້ໄຂບັນຫາການ ປະລະການຮຽນຂອງນິສິດວິທະຍາໄລສົງພຸດທະຊິນະຣາດ ແຂວງພິດນຸໂລກ. ວິທະຍານິພົນ, ສິລະປະສາດມະຫາບັນດິດ, ມະຫາວິທະຍາໄລນະເຣສວນ, 2009.

ຮຸ່ງໂຣດ ອາຣິຍະ. ບົດບາດຂອງອາຈານທີ່ປຶກສາໃນການລຸດບັນຫາການປະລະການຮຽນຂອງ ນັກຮຽນວິທະຍາໄລການອາຊີບຊຽງຄຳ ແຂວງພະເຢົາ. ຊຽງຣາຍ: ມະຫາວິ ທະຍາໄລຣາດຊະພັດຊຽງຣາຍ, 2009.

ວັດຊະຣິ ຕະກູນງາມ ແລະ ຄະນະ. ປັດໄຈທີ່ສົ່ງຜົນກະທົບຕໍ່ການປະລະການຮຽນຂອງ ນັກສຶກສາມະຫາວິທະຍາໄລລາດຊະພັດສວນດຸສິດ. ກຣຸງເທບ : ມະຫາວິທະຍາໄລລາດຊະພັດສວນດຸສິດ, 2007.

ສິຣິໄຊ ຊິນະຕັງກູນ. ຄວາມສູນເສຍລ້າທາງການສຶກສາ ແນວຄິດຈາກກຸ່ມອະນຸລັກນິຍົມ. ເອກະສານວິໄຈການສຶກສາ. ກຸງເທບມະຫານະຄອນ: ສໍານັກງານຄະນະກໍາ ມະການການສຶກສາແຫ່ງຊາດ, 1983.

ສົມຄິດ ຮັກສາຊັບ, ສຸພາພອນ ຕັນຈ້ອຍ ແລະ ວາດສະໜາ ດ້ວງເໜືອນ. ສາເຫດການປະລະການຮຽນຂອງນັກສຶກສາມະຫາວິທະຍາໄລເທັກໂນໂລຢີທາດຊະມົງຄົນກຣຸງເທບ. ລາຍງານວິໄຈ, ມະຫາວິທະຍາໄລເທັກໂນໂລຢີຣາດຊະມົງຄົນກຣຸງເທບ, 2014.

ສົມໃຈ ພຽນປຣະສິດ ແລະ ອັກຄຣັດ ພູນກຣະຈ່າງ. ການສຶກສາຄວາມຄິດເຫັນໃນການປະລະການຮຽນຂອງນັກສຶກສາຫຼັກສູດວິຊາຊີບໄລຍະສັ້ນໂຮງຮຽນຝຶກອາຊີບກຸງເທບມະຫານະຄອນ. ວາລະສານວິຊາການ ແລະ ວິໄຈ. ມທຣ ພະນະຄອນ, ປີທີ່ 5, (ສະບັບທີ່ 2), 2011.

ສັນໄຊ ກິຕິຍານັນ. ປັດໄຈທີ່ມີອິດທິພົນຕໍ່ການປະລະການຮຽນຂອງນັກສຶກສາຄະນະວິທະຍາການຈັດການ ມະ ຫາວິທະຍາໄລຣາດຊະພັດການຈັນບຸຣີ. ລາຍງານການວິໄຈ, ມະຫາວິທະຍາໄລຣາດຊະພັດການຈະນາບຸຣີ, 2010.

ສຣາວຸດ ສືບແຍ້ມ. ການສຶກສາສາເຫດການປະລະການຮຽນ ແລະ ບໍ່ສໍາເລັດການສຶກສາຕາມໄລຍະເວລາ ທີ່ກໍານົດໃນຫຼັກສູດຂອງນັກສຶກສາລະດັບປະລິນຍາຍາບັນດິດ ຄະນະວິສະວະກໍາສາດ ມະຫາວິທະຍາໄລ ເທັກໂນໂລຍີພະຈອມເກລົ້າພະນະຄອນເໜືອ. ລາຍງານການວິໄຈ, ມະຫາວິທະຍາໄລເທັກໂນໂລຍີພະຈອມເກລົ້າພະນະຄອນເໜືອ, 2009.

ສໍານັກງານຄະນະກໍາມະການການປະຖົມສຶກສາແຫ່ງຊາດໄທ. ວິທີການແກ້ໄຂບັນຫາການປະລະການຮຽນ. ກຣຸງເທບ : ກອງນະໂຍບາຍ ແລະ ແຜນ, 2000.

ສຸພາພອນ ພົມພະນິດ. ສາເຫດການປະລະການຮຽນຂອງນິສິດມະຫາວິທະຍາໄລມະຫາສານະຄາມ. ວິທະຍານິພົນ, ລັດປະສາສິນສາດຕົນມະຫາບັນດິດ, ມະຫາວິທະຍາໄລມະຫາສານະຄາມ, 2010.

ອຸໄຣຣັດນາ ໂພທິແກ້ວ. ສາເຫດການປະລະການຮຽນຂອງນັກຮຽນສາຂາສິລະປະຫັດກໍາ ລະດັບປະກາດນິຍະບັດວິຊາຊີບ ໃນວິທະຍາໄລອາຊີວະສຶກສາສັງກັດກົມອາຊີວະສຶກສາ ເຂດການສຶກສາ 6. ວິທະຍານິພົນ, ຄູສາດມະຫາບັນດິດ, ຈຸລາລົງກອນມະຫາວິທະຍາໄລ, 1996.

ເອກບຸດ ຢູ່ສຸກ. ສາເຫດການປະລະການຮຽນຂອງນັກສຶກສາ ຫຼັກສູດປະກາສະນິຍະບັດວິຊາຊີບ (ປວຊ) ວິທະຍາໄລການຊີບພຸດທະມົນທົນ ສໍານັກງານຄະນະກໍາມະ ການການອາຊີວະສຶກສາ. ວິທະຍານິພົນ, ຄຣຸສາດອຸດ ສາຫະກໍາມະຫາບັນດິດ, ສະຖາບັນເທກໂນໂລຍີພະຈອມເກລົ້າພະນະຄອນເໜືອ, 2006.

ອາຣີ ຜະສານສິນທຸວົງ. ສາເຫດການປະລະການຮຽນຂອງນັກສຶກສາ ມະຫາວິທະຍາໄລເອເຊຍອາຄະເນຊັ້ນປີທີ່ 1 ສົກສຶກສາ 2006. ລາຍງານການວິໄຈ. ກຸງເທບ: ບັນດິດວິທະຍາໄລ ມະຫາວິທະຍາໄລເອເຊຍອາຄະເນ. ສໍານັກງານເຂດພື້ນທີ່ການສຶກສາຈັນທະບຸຣີເຂດ 1, 2009.

ເມກ ຂະລາ. ການພັດທະນາລະບົບການຊ່ວຍເຫຼືອນັກຮຽນໂຮງຮຽນໂປລິເທັກນິກລ້ານນາ. ລາຍງານການວິໄລ: ມະ ຫາວິທະຍາໄລຊຽງໃໝ່, 2009.

ສຸພາພອນ ປີນະກາໂນ. ການປະລະການຮຽນຂອງນັກຮຽນໂຮງຮຽນບ້ານໜອງຂຽວ ສຳນັກງານເຂດພື້ນທີ່ການສຶກສາຊຽງໃໝ່ເຂດ 3. ການຄົ້ນຄ້ວາແບບອິດສະຫຼະ, ສຶກສາສາດມະຫາບັນດິດ, ສາຂາວິຊາການບໍລິຫານການສຶກສາ. ມະຫາວິທະຍາໄລຊຽງໃໝ່, 2009.

ພະແນກສຶກສາທິການ ແລະ ກິລາ ແຂວງຈຳປາສັກ. ບົດສະຫຼຸບການເຄື່ອນໄຫວ ປະຈຳສົກຮຽນ 2019–2020 ແລະ ແຜນການການເຄື່ອນໄຫວ ປະຈຳສົກຮຽນ 2020 -2021, 2020.

ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກຊ່ອງ. ບົດສະຫຼຸບການເຄື່ອນໄຫວ ປະຈຳສົກຮຽນ 2019–2020 ແລະ ແຜນການການເຄື່ອນໄຫວ ປະຈຳສົກຮຽນ 2020 -2021, 2020.

Wotruba, T. R., & Wright, P. L. **How to Develop a Teacher-Rating instrument**. *The Journal of Higher Evaluation, 12b* (10), 653-661, 1975.

Esch, Nicola T. Leaving Before Their Time: **High School Dropouts**. June 15, 2012.

Opara, K. C (2003). **A Comparative Study of the Factors of Influence Responsible for School Drop out in a Suburban and an Inner-City Public High School in Mercer County, New Jersey**. *Dissertation Ed. D. Morgan State* University, 2003.

Brarefoot, B. O. **Higher education's revolving door: confronting the problem of student drop out in US colleges and universities**. *Open Learning*. Vol.19, No.1, February, 2004.

Dulniak, Denis Joseph. **Predicting Freshmen Dropouts at Montana State UniversitUsing Selected Instructional Data**. Dissertation Abstracts International: Higher ducation, 1982.

Tylor, Ralph W. (1974). ***Basic Principles of***

***Curriculum Instruction***.Chicago: University Of Chicago, 1974.

Joseph. (1972, November). ***A Study of Dropouts in Louisiana Vocational-Technique School.*** Ph.D.Dissertation Louisiana State University and Agricultural & Mechanical College, 1972 (Online: http://proquest.umi.com/pqdweb?did=761227771&sid=2&Fmt=1&clientld=71090&RQT=309&VName=PQD.